# ລັດຖະບານປະເທດເດນມາກ ໃຫ້ການສະໜັບສະໜູນມູນຄ່າ 3.3 ລ້ານ ໂດລາ ໃຫ້ແກ່ແຜນງານການປະມົງ ຂອງຄະນະກຳມາທິການແມ່ນ້ຳຂອງສາກົນ.

MRC No. 19/08

ມື້ນີ້ລັດຖະບານແຫ່ງປະເທດເດນມາກ ໄດ້ເຊັນການຕົກລົງໃຫ້ທຶນມູນຄ່າ 18 ລ້ານ ໂຄຣເນີ (3.3 ລ້ານໂດລາ) ເພື່ອສະໜັບສະໜູນແກ່ແຜນງານການປະມົງຂອງຄະນະກຳມາທິການແມ່ນຳຂອງສາກົນ (MRC) ເປັນຊ່ວງເວລາ 2 ປີ.

ສັນຍາໄດ້ເຊັນຢູ່ທີ່ນະຄອນຫຼວງວຽງຈັນ ໂດຍພະນະທ່ານ ປີເຕີ ລີໂຊນ ຣັນເຊນ, ເອກອັກຄະລັດຊະທູດເດນມາກປະຈຳ ສສຫວຽດນາມ ແລະ ສປປລາວ, ໃນນາມລັດຖະບານແຫ່ງລາດຊະອານາຈັກເດນມາກ ແລະ ທ່ານ ເຈເຣມີ ເບີດ ຫົວໜ້າບໍລິຫານຂອງ MRC.

ເປັນເວລາຫລາຍປີມາແລ້ວທີ່ປະເທດເດນມາກໄດ້ໃຫ້ການສະໜັບສະໜູນແກ່ MRC ໃນບັນດາກິດຈະກຳຫຼັກ ໂດຍສະເພາະແມ່ນແຜນງານສິ່ງແວດລ້ອມ, ແຜນງານພັດທະນາອ່າງ, ແຜນງານການປະມົງ, ແຜນງານຄຸ້ມຄອງ ແລະ ບັນເທົາອຸທົກກະໄພ ແລະ ການສະເໜີແນະຕໍ່ການທົບທວນຄືນໂຄງສ້າງການຈັດຕັ້ງຂອງ MRC ແລະ ຄະນະກຳມະການແມ່ນ້ຳຂອງແຕ່ລະປະເທດ. ການສະໜັບສະໜູນຕໍ່ແຜນງານການປະມົງໄລຍະ II ສຳລັບປີ 2009-2010 ນີ້ແມ່ນສືບຕໍ່ຈາກການໃຫ້ເງິນຊ່ວຍເຫຼືອແກ່ແຜນງານການປະມົງ ຈຳນວນ 30 ລ້ານ ໂຄຣເນີ (5.5 ລ້ານໂດລາ) ໃນໄລຍະຜ່ານມາຄືໃນຊ່ວງ ປີ 2005-2008.

ການໃຫ້ທຶນແກ່ MRC ແມ່ນເປັນໄປຕາມນະໂຍບາຍຂອງປະເທດເດນມາກ ເພື່ອສົ່ງເສີມການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ມີຜະລິດຕະພາບ ແລະ ປະກອບສ່ວນໂດຍກົງໃຫ້ແກ່ການພັດທະນາແບບຍືນຍົງ ໂດຍສ້າງຄວາມແນ່ໃຈວ່າ MRC, ບັນດາອົງການຈັດຕັ້ງ ແລະ ຜູ້ຊົມໃຊ້ຊັບພະຍາກອນໃນບັນດາປະເທດພາຄີຈະຈັດຕັ້ງປະຕິບັດການຄຸ້ມຄອງການປະມົງແບບຍືນຍົງ ແລະ ການພັດທະນາໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບພູມມີພາກ.

ທ່ານ ເບີດ ໄດ້ກ່າວຂອບໃຈຕໍ່ລັດຖະບານປະເທດເດນມາກ ສຳລັບການສະໜັບສະໜູນທີ່ຕໍ່ເນື່ອງ ແລະ ເອື້ອເຟື້ອຕໍ່ວຽກງານຂອງ MRC ແລະ ກ່າວຕື່ມອີກວ່າການໃຫ້ທຶນຄັ້ງໃໝ່ນີ້ເປັນການສະໜັບສະໜູນທີ່ມີຄ່າໃຫຍ່ຫຼວງ ເພື່ອຊ່ວຍໃຫ້ MRC ສາມາດບັນລຸແຜນຍຸດທະສາດ 2006-2010 ທີ່ໄດ້ວາງໄວ້.

ທ່ານ ຍັງໄດ້ກ່າວອີກວ່າ "ພວກເຮົາໄດ້ວາງແຜນ 5 ປີ ອັນທະເຍີທະຍານ ໂດຍມີຈຸດປະສົງລວມ ເພື່ອສົ່ງເສີມການພັດທະນາແບບຍືນຍົງພາຍໃນອ່າງ ເພື່ອຫຼຸດຜ່ອນຄວາມທຸກຍາກ". ໃນມຸມມອງດ້ານ ໂພຊະນາການ, ການຈ້າງງານ, ແລະ ຄວາມສົມບູນພູນສຸກດ້ານເສດຖະກິດຂອງຊາວປະມົງຕາມ ຊົນນະບົດແລ້ວ, ການຄຸ້ມຄອງການປະມົງໃນນ້ຳຂອງຢ່າງມີຜະລິດຕະພາບແມ່ນເພື່ອສ້າງຄວາມຍືນຍົງ ຂອງຜົນຜະລິດ ແລະ ຜົນຮັບທາງເສດຖະກິດທີ່ສູງໄດ້ຖືກຢັ້ງຢືນແລ້ວວ່າເປັນໃຈກາງຂອງການພັດທະນາ ໃນອ່າງນ້ຳຂອງຕອນລຸ່ມ.

ທ່ານ ເອກອັກຄະລັດຊະທູດ ຮັນເຊນ ໄດ້ໃຫ້ຂໍ້ສັງເກດວ່າປະເທດເດນມາກ ແມ່ນມີຄວາມຍິນດີທີ່ ສາມາດສືບຕໍ່ໃຫ້ການສະໜັບສະໜູນວຽກງານສຳຄັນຂອງ MRC ໃນການສົ່ງເສີມການພັດທະນາ ແລະ ຄຸ້ມຄອງການປະມົງໃນອ່າງນ້ຳຂອງທີ່ມີການປະສານງານດີ ແລະ ຍືນຍົງ. ທ່ານ ຍັງໄດ້ກ່າວຕື່ມອີກວ່າ

"ໃນຊ່ວງໄລຍະທີ່ການປະມົງໃນອ່າງນ້ຳຂອງໄດ້ໄດ້ຮັບຄວາມກົດດັນທີ່ເພີ່ມຂຶ້ນຈາກຜົນກະທົບຂອງ ໂຄງການພັດທະນາແຫຼ່ງນ້ຳເຊັ່ນ: ການຊົນລະປະທານ, ໄຟຟ້ານ້ຳຕົກ ແລະ ນ້ຳປະປາ, ວຽກງານຂອງ MRC ໃນດ້ານດັ່ງກ່າວຍິ່ງມີຄວາມສຳຄັນຂຶ້ນໄປອີກ''.

"ທຶນຊ່ວຍເຫຼືອໃໝ່ຂອງພວກເຮົາຈະໄດ້ຊ່ວຍໃຫ້ MRC ສາມາດປະເມີນຜົນແບບຮີບດ່ວນຂອງບັນດາຜົນ ກະທົບເພື່ອສ້າງຄວາມໝັ້ນໃຈວ່າບັນດາຜູ້ຕັດສິນບັນຫາໃນອ່າງນ້ຳຂອງໄດ້ຮັບຮູ້ເຖິງຜົນທີ່ຕາມມາຈາກ ບັນດາໂຄງການພັດທະນາດັ່ງກ່າວ".

ພາຍໃນແຜນງານການປະມົງ, ການສະໜັບສະໜູນນີ້ຈະໃຊ້ເພື່ອຈັດຕັ້ງປະຕິບັດການເສີມຂະ ຫຍາຍແຜນງານ ໂດຍການຮ່ວມມືກັບໜ່ວຍງານປະມົງແຫ່ງຊາດ ເພື່ອສ້າງຂໍ້ມູນຂ່າວສານສຳລັບ MRC ແລະ ອົງການຈັດຕັ້ງກ່ຽວຂ້ອງ ເຊິ່ງລວມມີການພັດທະນາຄວາມອາດສາມາດ, ການຮ່ຳຮຽນໃນ ແລະ ນອກລະບົບ, ການສະໜັບສະໜູນທັກສະວິຊາຊີບ ແລະ ການສ້າງຈິດສຳນຶກຕໍ່ບົດບາດຍິງ-ຊາຍ ເຊິ່ງເປັນ ອົງປະກອບພື້ນຖານຂອງແຜນງານ.